ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 038 /ລອທ

ນະຄອນຫຼວງວຽງຈັນ, 24 APR 2020

ຮຽນ : ທ່ານຜູ້ຖືຮຸ້ນ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ການເລື່ອນການຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ທີ່ຈະຈັດຂຶ້ນໃນວັນທີ 30 ເມສາ 2020.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ, ສະບັບເລກທີ 06/ນຍ ລົງວັນທີ 29 ມີນາ 2020;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020;
- ອີງຕາມ ແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 0035/ສຄຄຊ ລົງວັນທີ 22 ເມສາ 2020.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ຖືຮຸ້ນຂອງບໍລິສັດຊາບວ່າ ບໍລິສັດຂອງພວກເຮົາຈະໄດ້ເລື່ອນການຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ອອກໄປ, ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ໃນ ສປປ ລາວ ແລະ ບັນດາປະເທດໃນທົ່ວໂລກ, ສະນັ້ນ ເພື່ອຄວາມປອດໄພຂອງຜູ້ທີ່ຈະເຂົ້າຮ່ວມກອງປະຊຸມ ແລະ ເປັນການປະຕິບັດຕາມມາດຕະການປ້ອງກັນພະຍາດໂຄວິດ-19 ທີ່ລັດຖະບານໄດ້ວາງອອກ, ບໍລິສັດ ຈຶ່ງມີຄວາມຈຳເປັນເລື່ອນການຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ອອກໄປ. ສ່ວນການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມ ແມ່ນຍັງຮັກສາໄວ້ຄືເກົ່າ, ການເລື່ອນກອງປະຊຸມດັ່ງກ່າວ ແມ່ນບໍ່ມີຜົນກະທົບຕໍ່ການປະຕິບັດວຽກງານຂອງບໍລິສັດ ແລະ ບໍ່ມີຜົນກະທົບຕໍ່ສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມແຕ່ຢ່າງໃດ. ບໍລິສັດ ຈະຕິດຕາມສະຖານະການການແຜ່ລະລະບາດຂອງພະຍາດໂຄວິດ-19 ຢ່າງໃກ້ຊິດ, ຖ້າສະຖານະການເຂົ້າສູ່ພາວະປົກກະຕິແລ້ວ ບໍລິສັດຈະກຳນົດ ວັນ, ເວລາ ແລະ ສະຖານທີ່ຄືນໃຫມ່ ພາຍໃນເດືອນ ພຶດສະພາ 2020 ແລະ ຈະແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຂໍອະໄພມາພະໂອກາດນີ້ດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ອຸດົມ ແກ້ວທະວົງ
Oudom KEOTHAVONG